ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 22 ພຶສຈິກາ 2026 (11-22-2026)

ການປະກາດຂອງການໃຫ້ອະໄພ

ຈຸດສຳຄັນໃນບົດຮຽນ: ເມື່ອເຮົາໄດ້ຮັບການໃຫ້ອະໄພຈາກພຣະເຈົ້າ, ເຮົາຄວນບອກໃຫ້ທຸກຄົນຮູ້.

ພຣະຄັມພີຕອບສນອງຕໍ່ຊີວິດ: ເບິ່ງທີ່ໂລກຂອງພວກເຮົາ

ເຈົ້າເຄີຍສັງເກດບໍ່ວ່າ ພວກເຮົາສະແດງຕົວຕົນວ່າເປັນສ່ວນໜຶ່ງຂອງທີມກິລາທີ່ເຮົາມັກຢ່າງເປີດເຜີຍ ແລະເຕັມໃຈພຽງໃດ?...ໃນຕອນເລີ່ມຕົ້ນຂອງຄຳເທດສະໜາ ຊຶ່ງເວົ້າເຖິງການອົດທົນຜ່ານຜ່າຄວາມທຸກຍາກລຳບາກ, ຂ້ອຍໄດ້ຍົກຕົວຢ່າງເລື່ອງຂອງ ເດຍ໌ ດເຣ ແວັກກີ Dave Dravecky, ອະດີດນັກຂວ້າງບານ (pitcher) ຂອງທີມ ແຊນ ຟແຣນຊິດສະໂກ ຈາຍແອັນ San Francisco Giants ຜູ້ທີ່ຕ້ອງສູນເສຍແຂນຂ້າງທີ່ໃຊ້ຂວ້າງບານໄປຍ້ອນພະຍາດມະເຮັງ. ຕອນທຳອິດ ຂ້ອຍກໍບໍ່ແນ່ໃຈວ່າຕົວຢ່າງນີ້ຈະໄດ້ຜົນດີປານໃດ ເພາະໂບດແຫ່ງນີ້ຕັ້ງຢູ່ໃນພາກໃຕ້ຂອງລັດ ແຄລິຟໍເນຍ California, ເຊິ່ງຫ່າງຈາກສະໜາມບານທີມ ດ໋ອດເຈີ Dodger Stadium ພຽງແຕ່ 10 ໄມລ໌ເທົ່ານັ້ນ. ດັ່ງນັ້ນ, ຂ້ອຍຈຶ່ງເລີ່ມຕົ້ນດ້ວຍຮອຍຍິ້ມແລະກ່າວຂໍໂທດທີ່ເວົ້າເຖິງທີມຄູ່ແຂ່ງໃນລີກດຽວກັນນັ້ນໃນທາງທີ່ດີ. ຂ້ອຍຮູ້ໄດ້ແນວໃດວ່າມີແຟນທີມ ດ໋ອດເຈີ ຢູ່ໃນນັ້ນ? ກໍຍ້ອນວ່າຂ້ອຍເຄີຍເຫັນພວກເຂົາໃສ່ເສື້ອ ແລະ ໝວກຂອງທີມ ດ໋ອດເຈີ ຕອນທີ່ຂ້ອຍໄດ້ມາເທດສະໜາຢູ່ທີ່ນີ້ມາກ່ອນ. ໂດຍປົກກະຕິແລ້ວ, ເຮົາສາມາດບອກໄດ້ວ່າຄົນໃດເປັນແນວໃດ ໂດຍສັງເກດຈາກເຄື່ອງນຸ່ງທີ່ພວກເຂົາໃສ່. ສຳລັບຊາວຄຣິດແລ້ວ, ຍັງມີຮູບແບບການສະແດງຕົວຕົນທີ່ສຳຄັນກວ່ານັ້ນອີກ, ເຊິ່ງເອີ້ນວ່າ: ການຮັບບັບຕິສະມາ. ການຮັບບັບຕິສະມາຄືວິທີທີ່ຜູ້ທີ່ໄດ້ຮັບການອະໄພບາບແລ້ວ ໃຊ້ເພື່ອສະແດງໃຫ້ເຫັນວ່າ ພວກເຂົາເປັນສ່ວນໜຶ່ງຂອງພຣະເຢຊູຄຣິດ. *ເຈົ້າມີວິທີແນວໃດແດ່ໃນການອວດເຖິງບຸກຄົນ ຫຼື ສິ່ງຕ່າງໆທີ່ມີຄວາມສຳຄັນຕໍ່ເຈົ້າ?*

ພຣະຄັມພີກ່າວວ່າຢ່າງໃດ? (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

<u>ສຶກສາພຣະຄັມພີ</u>

<u>1. ກິດຈະການ 10:44-48</u> ການຮັບບັບຕິສະມາແມ່ນການສະແດງອອກພາຍນອກຂອງການໃຫ້ອະໄພຂອງພຣະເຈົ້າ.

44. "ຂະນະທີ່ເປໂຕຍັງກ່າວຢູ່ນັ້ນ ພຣະວິນຍານບໍຣິສຸດເຈົ້າກໍລົງມາເທິງທຸກຄົນທີ່ກຳລັງຟັງຖ້ອຍຄຳນັ້ນ. 45. ສ່ວນຜູ້ທີ່ເຊື່ອ ຄືຄົນຍິວທີ່ມາຈາກເມືອງຢົບປາກັບເປໂຕນັ້ນ ຕ່າງກໍງຶດປະຫລາດໃຈ ທີ່ພຣະເຈົ້າໄດ້ໂຜດປະທານພຣະວິນຍານບໍຣິສຸດເຈົ້າໃຫ້ແກ່ຄົນຕ່າງຊາດເໝືອນກັນ. 46. ດ້ວຍວ່າ ພວກເຂົາໄດ້ຍິນຄົນເຫຼົ່ານີ້ປາກພາສາແປກໆ ແລະສັນລະເສີນຄວາມຍິ່ງໃຫຍ່ຂອງພຣະເຈົ້າ ຝ່າຍເປໂຕຈຶ່ງກ່າວຂຶ້ນວ່າ, 47. "ຄົນເຫຼົ່ານີ້ໄດ້ຮັບພຣະວິນຍານບໍຣິສຸດເຈົ້າຄືກັນກັບພວກເຮົາ. ດັ່ງນັ້ນ ຄົງບໍ່ມີຜູ້ໃດຕີ ທີ່ຈະຫ້າມພວກເຂົາ ບໍ່ໃຫ້ຮັບບັບຕິສະມາດ້ວຍນ້ຳ." 48. ດັ່ງນັ້ນ ເປໂຕຈຶ່ງສັ່ງຄົນເຫຼົ່ານັ້ນ ໃຫ້ຮັບບັບຕິສະມາໃນນາມຂອງພຣະເຢຊູຄຣິດເຈົ້າ ແລ້ວພວກເຂົາກໍຂໍໃຫ້ເປໂຕຢູ່ກັບພວກຕົນອີກສອງສາມວັນ."

ໃນຖານະເປັນພາກຕໍ່ຂອງຂ່າວປະເສີດທີ່ທ່ານໄດ້ຂຽນຂຶ້ນ, ທ່ານລູກາໄດ້ຂຽນພຣະທຳກິດຈະການ ເພື່ອສະແດງໃຫ້ເຫັນວ່າຂ່າວປະເສີດໄດ້ແຜ່ຂະຫຍາຍອອກໄປຈາກເມືອງເຢຣູຊາເລັມ, ແຂວງຢູດາຍ ແລະ ແຂວງຊາມາເຣຍ "ໄປຈົນເຖິງທີ່ສຸດປາຍແຜ່ນດິນໂລກ" ແລະ ບໍ່ໄດ້ຖືກຂັດຂວາງໂດຍກຳລັງຕ່າງໆທີ່ຕໍ່ຕ້ານມັນ (ກຈກ 1:8; ເບິ່ງ 28:31). ໃນອັນເພັນເຕຄໍສະເຕ, ພຣະວິນຍານຂອງພຣະເຈົ້າໄດ້ສະເດັດລົງມາເໜືອຜູ້ຄົນແລະ ບັນດາສາວົກກໍໄດ້ປະກາດຂ່າວປະເສີດດ້ວຍຄວາມກ້າຫານ. ດ້ວຍການອັດສະຈັນ, ຜູ້ຄົນສາມາດໄດ້ຍິນຂ່າວສານນັ້ນໃນພາສາທ້ອງຖິ່ນຂອງຕົນເອງ (2:1-11). ເມື່ອໃດກໍຕາມທີ່ຜູ້ຄົນເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດ, ພວກເຂົາກໍຈະປະກາດຂ່າວປະເສີດດ້ວຍຄວາມກ້າຫານ. ຮູບແບບນີ້ປາກົດໃຫ້ເຫັນຕະຫຼອດການບັນທຶກຂອງລູກາກ່ຽວກັບຄຣິສຕະຈັກໃນ

ຍຸກທຳອິດ. ບາງຄັ້ງ ຂ່າວສານກໍຖືກກ່າວອອກມາໃນພາສາໜຶ່ງ ແຕ່ຜູ້ຟັງກັບເຂົ້າໃຈໃນອີກພາສາໜຶ່ງ, ເຖິງແມ່ນວ່າຈະບໍ່ເປັນແບບນັ້ນ ໃນທຸກໆຄັ້ງກໍຕາມ. ຕົວຢ່າງເຊັ່ນ: **ເປໂຕ,** ຜູ້ທີ່ເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດ, ໄດ້ເປັນພະຍານຕໍ່ໜ້າບັນດາຜູ້ປົກຄອງທີ່ຈັບກຸມ ເພິ່ນຍ້ອນການປະກາດຂ່າວປະເສີດ (ກຈກ 4:1-13). **ບັນດາຜູ້ເຊື່ອໄດ້ອະທິຖານຂໍຄວາມກ້າຫານ**, ພວກເຂົາໄດ້ຮັບການເຕັມປ່ຽມ ດ້ວຍພຣະວິນຍານບໍຣິສຸດ ແລະໄດ້ປະກາດຂ່າວປະເສີດດ້ວຍຄວາມກ້າຫານ (ກຈກ 4:23-31). **ໂຊໂລ ແຫ່ງເມືອງຕາໂຊ,** ຜູ້ທີ່ເຕັມ ປ່ຽມດ້ວຍພຣະວິນຍານບໍຣິສຸດ, ໄດ້ເລີ້ມຕົ້ນຊີວິດໃນການປະກາດຂ່າວປະເສີດຢ່າງກ້າຫານ-ເຖິງແມ່ນວ່າຈະມີກຳລັງພາຍນອກມາຕໍ່ ຕ້ານ ແລະພະຍາຍາມຂັດຂວາງເພິ່ນກໍຕາມ (ກຈກ 9:17-28:31). **ໂປໂລ,** ຜູ້ທີ່ເຕັມປ່ຽມດ້ວຍພຣະວິນຍານບໍຣິສຸດ, ໄດ້ຕັກເຕືອນຜູ້ ທຳນວາຍປອມຄົນໜຶ່ງ ແລະໄດ້ປະກາດຄວາມຈິງຂອງຂ່າວປະເສີດ (ກຈກ 13:4-12). **ບັນດາສາວົກ,** ຜູ້ທີ່ເຕັມປ່ຽມດ້ວຍພຣະວິນ ຍານບໍຣິສຸດ, ໄດ້ເຜີຍແຜ່ຂ່າວປະເສີດໄປສູ່ບັນດາຄົນຕ່າງຊາດ (ກຈກ 13:48-52). ເຖິງຢ່າງໃດກໍຕາມ, ໃນກິດຈະການ ບົດທີ 10 ເຊັ່ນດຽວກັນກັບໃນບົດທີ 2 ແລະ ບົດທີ 19, ໄດ້ມີການສື່ສານແບບອັດສະຈັນເກີດຂຶ້ນ ໃນຂະນະທີ່ມີການປະກາດຂ່າວປະເສີດຂ້າມ ວັດທະນະທຳ. ເປໂຕໄດ້ປະກາດຂ່າວປະເສີດແກ່ຄົນຕ່າງຊາດ, ແລະ ພຣະວິນຍານບໍຣິສຸດກໍສະເດັດລົງມາເໜືອພວກເຂົາ ເຮັດໃຫ້ ຫຼາຍຄົນໃນຈຳນວນນັ້ນເຊື່ອໃນພຣະອົງ. ການ "ເວົ້າພາສາແປກໆ" (10:46) ນີ້ ເປັນສິ່ງທີ່ເຊື່ອມໂຍງເຫດການທີ່ພຣະວິນຍານບໍຣິສຸດ ສະເດັດລົງມານີ້ ເຂົ້າກັບເຫດການໃນອັນເພນເຕກອດ; ແຕ່ດັ່ງທີ່ເຮົາໄດ້ເຫັນແລ້ວວ່າ, ບໍ່ແມ່ນທຸກຄັ້ງທີ່ມີຜູ້ໄດ້ຮັບການເຕັມປ່ຽມດ້ວຍ ພຣະວິນຍານບໍຣິສຸດ ຈະຕ້ອງມີການເວົ້າພາສາແປກໆສະເໝີໄປ. ສິ່ງທີ່ເຫດການເຫຼົ່ານີ້ມີຄືກັນກໍຄື ການປະກາດຂ່າວປະເສີດຢ່າງກ້າ ຫານ. ລູກາໄດ້ໃຊ້ສຳນວນທີ່ວ່າ "ເວົ້າພາສາແປກໆ" ເພື່ອອ້າງເຖິງການສື່ສານແບບອັດສະຈັນທີ່ເກີດຂຶ້ນໃນກຸ່ມພວກຄົນຕ່າງຊາດ (10:46)-ເຊິ່ງຄ້າຍຄືກັນກັບສິ່ງທີ່ເກີດຂຶ້ນໃນກຸ່ມຊາວຢິວໃນອັນເພັນເຕຄໍສະເຕ (2:111) ໂດຍຖືວ່າເປັນເຫດຜົນທີ່ຄວນໃຫ້ມີການບັບຕິ ສະມາແກ່ຄົນຕ່າງຊາດຜູ້ທີ່ເຊື່ອເຫຼົ່ານັ້ນ. ຊ່ອງຫວ່າງອັນໃຫຍ່ຫຼວງລະຫວ່າງຊາວຢິວ ແລະຄົນຕ່າງຊາດບໍ່ສາມາດກີດກັ້ນຂ່າວປະເສີດ ໄດ້. ເຖິງແມ່ນວ່າພວກເຂົາມາຈາກວັດທະນະທຳທີ່ແຕກຕ່າງກັນ, ມີຮາກຖານມໍລະດົກທີ່ຕ່າງກັນ ແລະເວົ້າພາສາທີ່ຕ່າງກັນ, ແຕ່ພຣະ ວິນຍານບໍຣິສຸດກໍໄດ້ຊົງກະທຳກິດເພື່ອສ້າງຄວາມເປັນນ້ຳໜຶ່ງໃຈດຽວກັນ; ແລະເປໂຕກໍບໍ່ໄດ້ຂັດຂວາງການບັບຕິສະມາ ໃນເມື່ອພຣະ ວິນຍານບໍຣິສຸດກຳລັງຊົງກະທຳກິດຢູ່ໃນພວກເຂົາ. ສຳລັບຜູ້ອ່ານໃນຍຸກປັດຈຸບັນ, ເລື່ອງນີ້ອາດເບິ່ງຄືວ່າເປັນເລື່ອງທຳມະດາທີ່ເຂົ້າໃຈ ໄດ້ງ່າຍ, ແຕ່ໃນສະໄໝນັ້ນ ມັນຖືເປັນບາດກ້າວພັດທະນາທີ່ສຳຄັນຍິ່ງ. ຄຣິສຕະສາດສະໜາໄດ້ກຳເນີດຂຶ້ນຈາກຄວາມເຊື່ອຂອງຊາວ ຢິວ ແລະໃນໄລຍະທຳອິດກໍໄດ້ແຜ່ຂະຫຍາຍໄປໃນໝູ່ຊາວຢິວເທົ່ານັ້ນ. ການຂະຫຍາຍຂ່າວປະເສີດໄປສູ່ຄົນຕ່າງຊາດໄດ້ເລີ້ມຕົ້ນຂຶ້ນ ຕັ້ງແຕ່ຕອນຕົ້ນຂອງບົດທີ 10 ແລະມາເຖິງຈຸດສູງສຸດ ເມື່ອພຣະວິນຍານບໍຣິສຸດສະຖິດລົງມາເໜືອຄົນຕ່າງຊາດເຫຼົ່ານັ້ນ. ເປໂຕບໍ່ໄດ້ ໂຕ້ແຍ້ງວ່າ ການບັບຕິສະມາເປັນສິ່ງຈຳເປັນສຳລັບຄວາມລອດຂອງພວກເຂົາ. ແຕ່ເຫດຜົນທີ່ທ່ານຍົກຂຶ້ນມາແມ່ນວ່າ ໃນເມື່ອພວກ ເຂົາໄດ້ກາຍເປັນຜູ້ເຊື່ອແລ້ວຄວນຮັບບັບຕິສະມາ ເຊັ່ນດຽວກັນກັບຊາວຢິວສາມພັນຄົນທີ່ເຊື່ອໃນພຣະເຢຊູໃນວັນເພນເຕກອດ (ກຈກ 2:41). ພວກເຂົາບໍ່ຄວນຖືກກີດກັນອອກໄປ. ການຮັບບັບຕິສະມາເປັນສ່ວນສຳຄັນໃນຊີວິດຂອງຄຣິສຕຽນ. ນັບຕັ້ງແຕ່ຍຸກທຳອິດຂອງ ຄຣິສຕະຈັກ, ຜູ້ທີ່ຍອມຮັບວ່າພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ ກໍໄດ້ຮັບບັບຕິສະມາ. ການຮັບບັບຕິສະມານັ້ນໝາຍເຖິງການ: ປະ ຕິບັດຕາມແບບຢ່າງຂອງພຣະເຢຊູ (ລູກາ 3:21-22). ຄືປະຕິບັດສອດຄ່ອງກັບພຣະບັນຊາຂໍ້ໃຫຍ່ (ມັດທາຍ 28:19-20). ສະແດງ ໃຫ້ເຫັນວ່າພວກເຂົາໄດ້ກາຍເປັນສິ່ງສ້າງຂຶ້ນໃໝ່ໃນພຣະຄຣິດແລ້ວ (ກລຊ 2:12; 2 ກຣທ 5:17)....*ເປັນຫຍັງການຮັບບັບຕິສະມາ ຈຶ່ງມີຄວາມສຳຄັນຫຼາຍສຳລັບຄຣິສຕຽນ? ເຈົ້າຈະອະທິບາຍຄວາມໝາຍ ແລະ ວິທີການຮັບບັບຕິສະມາແນວໃດ?*

2. <u>ກິດຈະການ 16:30-34</u> ການຮັບບັບຕິສະມາມີຜົນກະທົບຕໍ່ຄົນອື່ນທີ່ຢູ່ອ້ອມຮອບຕົວເຮົາ.

30. "ແລ້ວໄດ້ພາທ່ານທັງສອງອອກມາ ແລ້ວຖາມວ່າ, "ທ່ານເອີຍ ຂ້ານ້ອຍຈະຕ້ອງເຮັດຢ່າງໃດຈຶ່ງຈະໄດ້ລອດພົ້ນ?" 31. ພວກເພິ່ນ ຕອບວ່າ, "ຈົ່ງເຊື່ອໃນອົງພຣະເຢຊູເຈົ້າ ແລ້ວເຈົ້າກັບຄອບຄົວຂອງເຈົ້າກໍຈະໄດ້ພົ້ນ." 32. ແລ້ວທ່ານທັງສອງກໍກ່າວພຣະທຳຂອງອົງ ພຣະຜູ້ເປັນເຈົ້າສູ່ລາວຟັງ ພ້ອມກັບທຸກຄົນທີ່ຢູ່ໃນເຮືອນຂອງລາວ. 33. ໃນຊົ່ວໂມງດຽວຂອງກາງຄືນນັ້ນເອງ ເຈົ້າໜ້າທີ່ກຳພາພວກ ເພິ່ນໄປລ້າງບາດ ແລະລາວກັບທຸກຄົນໃນຄອບຄົວກໍຮັບບັບຕິສະມາໂດຍທັນທີ. 34. ແລ້ວເຈົ້າໜ້າທີ່ກໍໄດ້ພາໂປໂລກັບຊີລາຂຶ້ນໄປໃນ ເຮືອນຂອງຕົນ ແລ້ວໃຫ້ຄົນແຕ່ງອາຫານມາໃຫ້ພວກເພິ່ນກິນ, ລາວກັບຄອບຄົວຂອງລາວຈຶ່ງເຕັມດ້ວຍຄວາມຊົມຊື່ນຍິນດີ ເພາະບັດນີ້

ພວກເຂົາໄດ້ເຊື່ອໃນພຣະເຈົ້າແລ້ວ."

ໃນຂະນະທີ່ການຮັບບັບຕິສະມາເປັນການຕອບສະໜອງຕາມປົກກະຕິສຳລັບຜູ້ທີ່ໄດ້ຮັບປະສົບການໃນການໃຫ້ອະໄພຈາກພຣະຄຣິດ, ແຕ່ການເວົ້າພາສາແປກໆນັ້ນບໍ່ແມ່ນ. ໃນກໍລະນີອື່ນໆ ທີ່ຜູ້ຄົນໄດ້ມາເຊື່ອໃນພຣະຄຣິດ, ບໍ່ໄດ້ມີການສື່ສານແບບອັດສະຈັນເກີດຂຶ້ນ, ຫາກແຕ່ມີພຽງພະຍານຜູ້ທີ່ເຕັມປ່ຽມດ້ວຍພຣະວິນຍານ ໄດ້ປະກາດຂ່າວປະເສີດດ້ວຍຄວາມກ້າຫານເທົ່ານັ້ນ. ຕົວຢ່າງທີ່ໂດດເດັ່ນໄດ້ແກ່ ການກັບໃຈເຊື່ອຂອງຄົນເທື່ອຍຊາວເອທິໂອເປຍ ໃນພຣະທຳກິດຈະການ 8:26-40 ແລະ ເຈົ້າໜ້າທີ່ຄຸມຄຸກຊາວຟີລິບປອຍ ໃນພຣະທຳກິດຈະການ 16:23-34. ໃນຂະນະທີ່ໂປໂລ ແລະ ທີມງານຂອງເພິ່ນກຳລັງປະກາດຂ່າວປະເສີດແກ່ຄົນຕ່າງຊາດໃນເມືອງຟີລິບປອຍ, ພວກເພິ່ນໄດ້ພົບກັບຂ້າທາດຍິງຄົນໜຶ່ງ "ຜູ້ມີວິນຍານຊົ່ວສິງຢູ່ ຊຶ່ງເຮັດໃຫ້ນາງສາມາດທຳນວາຍອະນາຄົດໄດ້" (ກຈກ 16: 16). ນາງໄດ້ຮ້ອງຂຶ້ນຊ້ຳໆວ່າ: "ຄົນເຫຼົ່ານີ້ເປັນຜູ້ຮັບໃຊ້ຂອງພຣະເຈົ້າສູງສຸດ, ພວກເຂົາມາປະກາດເສັ້ນທາງແຫ່ງຄວາມລອດໃຫ້ແກ່ພວກທ່ານ!" (ຂໍ້ 17). ສິ່ງທີ່ນາງເວົ້ານັ້ນແມ່ນຄວາມຈິງ; ພວກເຂົາເປັນຜູ້ຮັບໃຊ້ຂອງພຣະເຈົ້າແທ້ ແລະ ກຳລັງປະກາດເສັ້ນທາງແຫ່ງຄວາມລອດຢູ່. ແຕ່ດ້ວຍເຫດຜົນບາງຢ່າງ, ເລື່ອງນີ້ເຮັດໃຫ້ໂປໂລຮູ້ສຶກລຳຄານໃຈ, ເພິ່ນຈຶ່ງຂັບໄລ່ວິນຍານຊົ່ວນັ້ນອອກຈາກຕົວນາງ ໂດຍອ້າງພຣະນາມຂອງພຣະເຢຊູ. ເມື່ອໂປໂລຂັບໄລ່ວິນຍານຊົ່ວອອກຈາກຍິງສາວຄົນນັ້ນ, ເຈົ້າຂອງຂອງນາງກໍເກີດຄວາມໂກດແຄ້ນໂປໂລ, ເພາະວ່າໂອກາດທີ່ຈະສ້າງລາຍໄດ້ຈາກຄວາມສາມາດໃນການທຳນວາຍຂອງນາງໄດ້ໝົດໄປພ້ອມກັບວິນຍານຊົ່ວນັ້ນ. ເວົ້າງ່າຍໆກໍຄື, ນາງບໍ່ສາມາດສ້າງລາຍໄດ້ໃຫ້ພວກເຂົາໄດ້ອີກຕໍ່ໄປ (ຂໍ້ 19). ພວກເຂົາຈຶ່ງຈັບຕົວໂປໂລ ແລະ ຊີລາ ໄປສົ່ງໃຫ້ເຈົ້າໜ້າທີ່ບ້ານເມືອງ ພ້ອມທັງຍື່ນຄຳຮ້ອງທຸກ ໂດຍກ່າວຫາວ່າທັງສອງເປັນຄົນຕ່າງຖິ່ນທີ່ເຂົ້າມາກໍ່ຄວາມວຸ້ນວາຍ ແລະ ພະຍາຍາມປ່ຽນແປງວັດທະນະທຳຂອງຊາວໂຣມັນ. ພວກເຂົາຮຽກຮ້ອງໃຫ້ເຈົ້າໜ້າທີ່ຢ່າປ່ອຍໃຫ້ແນວຄວາມຄິດທີ່ແຕກຕ່າງຂອງໂປໂລ ແລະ ຊີລາ ດຳເນີນຕໍ່ໄປ. ເຈົ້າໜ້າທີ່ ແລະ ຝູງຊົນກໍຕັດສິນລົງໂທດຢ່າງຮີບດ່ວນ ໂດຍການທຸບຕີໂປໂລ ແລະ ຊີລາ, ຈັບພວກເພິ່ນຂັງຄຸກ ແລະ ສັ່ງໃຫ້ຜູ້ຄຸມຄຸກເຝົ້າລະວັງຢ່າງໃກ້ຊິດ. ຜູ້ຄຸມຄຸກໄດ້ເພີ່ມມາດຕະການຮັກສາຄວາມປອດໄພຢ່າງເຂັ້ມງວດ ໂດຍນຳພວກເພິ່ນໄປຂັງໄວ້ໃນບ່ອນທີ່ມີການປ້ອງກັນແໜ້ນໜາ ແລະ ໃສ່ໂສ້ທີ່ຕີນໄວ້ ເພື່ອບໍ່ໃຫ້ພວກເພິ່ນສາມາດໜີໄປໃສໄດ້ເລີຍ. ແທນທີ່ຈະຈົ່ມວ່າ, ພວກເຂົາໄດ້ເລືອກທີ່ຈະສັນລະເສີນ (ຂໍ້ 25). ໃນຂະນະທີ່ພວກເຂົາຮ້ອງເພງ, ນັກໂທດຄົນອື່ນໆກໍຕັ້ງໃຈຟັງ, ແຕ່ຜູ້ຄຸມຄຸກບໍ່ໄດ້ຟັງ ເພາະລາວກຳລັງນອນຫຼັບຢູ່. ປະມານທ່ຽງຄືນ, ໄດ້ເກີດແຜ່ນດິນໄຫວຂຶ້ນ, ປະຕູຄຸກເປີດອອກ ແລະໂສ້ກໍຫຼຸດອອກ. ຜູ້ຄຸມຄຸກຕື່ນຂຶ້ນມາ ແລະ ເມື່ອຄິດວ່ານັກໂທດທຸກຄົນໜີໄປໝົດແລ້ວ, ລາວກໍກຽມຈະຂ້າຕົວຕາຍ. ໂປໂລ ໄດ້ຫ້າມລາວໄວ້ບໍ່ໃຫ້ທຳຮ້າຍຕົນເອງ, ເພາະວ່າພວກເຂົາຍັງບໍ່ໄດ້ໜີໄປໃສເລີຍ. ຫຼັງຈາກທີ່ລອດພົ້ນຈາກຄວາມຕາຍທາງຮ່າງກາຍແລ້ວ, ຜູ້ຄຸມຄຸກກໍເລີ່ມສົນໃຈທີ່ຈະລອດພົ້ນຈາກຄວາມຕາຍທາງວິນຍານ. ດັ່ງນັ້ນ, ລາວຈຶ່ງພາ ໂປໂລ ແລະ ຊີລາ ອອກມາຈາກຄຸກ ເພື່ອສອບຖາມກ່ຽວກັບຄວາມລອດ. ດ້ວຍຄວາມເມດຕາ, ລາວໄດ້ລ້າງບາດແຜໃຫ້ພວກເຂົາ; ແລະດ້ວຍການເຊື່ອຟັງ, ລາວພ້ອມກັບຄອບຄົວຂອງລາວ ກໍໄດ້ເຊື່ອໃນພຣະເຈົ້າ ແລະຮັບບັບຕິສະມາໃນທັນທີ. ການໄດ້ສຳຜັດກັບຄວາມປິຕິຍິນດີທີ່ເກີດຈາກການເຊື່ອຟັງ ເປັນເຫດຜົນໜຶ່ງທີ່ບໍ່ຄວນເລື່ອນການຮັບບັບຕິສະມາອອກໄປ; ແລະ ອີກເຫດຜົນໜຶ່ງກໍຄື ການຮັບບັບຕິສະມາຂອງເຈົ້າ ອາດຈະເປັນແຮງບັນດານໃຈໃຫ້ຄົນອື່ນໆຫັນມາເຊື່ອໃນພຣະເຈົ້າໄດ້ເຊັ່ນກັນ....*ເຈົ້າເຄີຍເຫັນພິທີບັບຕິສະມາສົ່ງຜົນກະທົບແນວໃດຕໍ່ສະມາຊິກໃນຄອບຄົວຂອງຜູ້ທີ່ຮັບບັບຕິສະມານັ້ນ?*

3. <u>ກິດຈະການ 19:1-5</u> ສູນກາງຂອງການບັບຕິສະມາຕ້ອງແມ່ນໃນພຣະຄຣິດ.

1. "ຂະນະທີ່ອາໂປໂລຢູ່ທີ່ເມືອງໂກຣິນໂທນັ້ນ ໂປໂລກຳລັງຜ່ານໄປທົ່ວເຂດພາກເໜືອໃນແຂວງນີ້ ແລະເດີນທາງມາຮອດເມືອງເອເຟໂຊ, ໃນທີ່ນີ້ໂປໂລໄດ້ພົບສິດບາງຄົນ 2. ເພິ່ນຖາມພວກເຂົາວ່າ, "ເມື່ອພວກເຈົ້າຮັບເຊື່ອນັ້ນ ພວກເຈົ້າໄດ້ຮັບພຣະວິນຍານບໍຣິສຸດເຈົ້າຫລືບໍ່?" ພວກເຂົາຕອບວ່າ, "ພວກເຮົາບໍ່ເຄີຍໄດ້ຍິນຜູ້ໃດເວົ້າວ່າມີພຣະວິນຍານບໍຣິສຸດເຈົ້າ." 3. ແລ້ວໂປໂລຈຶ່ງຖາມພວກເຂົາວ່າ, "ຖ້າຢ່າງນັ້ນ ພວກເຈົ້າໄດ້ຮັບບັບຕິສະມາແນວໃດ?" ພວກເຂົາຕອບວ່າ, "ບັບຕິສະມາຂອງໂຢຮັນ." 4. ໂປໂລຈຶ່ງບອກວ່າ, "ບັບຕິສະມາຂອງໂຢຮັນແມ່ນສຳລັບຄົນທີ່ຖິ້ມໃຈເກົ່າເອົາໃຈໃໝ່ ແລະເພິ່ນໄດ້ບອກປະຊາຊົນອິດສະຣາເອນ ໃຫ້ເຊື່ອໃນຜູ້ທີ່ມາພາຍຫລັງເພິ່ນ ຄືເຊື່ອໃນພຣະເຢຊູເຈົ້າ." 5. ເມື່ອໄດ້ຍິນດັ່ງນີ້ ພວກເຂົາກໍຮັບບັບຕິສະມາໃນນາມຂອງອົງພຣະເຢຊູເຈົ້າ."

ເມື່ອໂປໂລມາຮອດເມືອງເອເຟໂຊ, ທ່ານໄດ້ພົບກັບຜູ້ເຊື່ອຈຳນວນໜຶ່ງທີ່ຍັງບໍ່ທັນໄດ້ຍິນເລື່ອງພຣະວິນຍານບໍຣິສຸດເທື່ອ; ດັ່ງນັ້ນໂປໂລຈຶ່ງຢາກຮູ້ເພີ້ມເຕີມກ່ຽວກັບການຮັບບັບຕິສະມາຂອງພວກເຂົາ. ໂດຍສະເພາະແລ້ວ, ທ່ານຢາກຮູ້ວ່າພວກເຂົາໄດ້ຮັບປະສົບການໃນການມີພຣະວິນຍານບໍຣິສຸດສະຖິດຢູ່ໃນຕົວພວກເຂົາຫຼືບໍ່. ສິ່ງທີ່ພຣະເຢຊູໄດ້ສັນຍາໄວ້ກັບພວກສາວົກຂອງພຣະອົງ (ໂຢຮັນ 14:16-17). ມັນເປັນສິ່ງສຳຄັນທີ່ການຮັບບັບຕິສະມາຈະຕ້ອງເປັນໄປຕາມຫຼັກການໃນພຣະຄຳພີ. ການຮັບບັບຕິສະມາແບບຄຣິສຕຽນນັ້ນ: ກະທຳຂຶ້ນຫຼັງຈາກທີ່ບຸກຄົນໜຶ່ງໄດ້ເຊື່ອແລ້ວ (ບໍ່ແມ່ນກ່ອນໜ້ານັ້ນ), ເຊິ່ງຖືເປັນການສະແດງເຖິງການເຊື່ອຟັງ ກະທຳໂດຍການຈຸ່ມລົງໃນນ້ຳ, ບໍ່ແມ່ນການຊິດນ້ຳ ຫຼື ການເທນ້ຳໃສ່. ເນື່ອງຈາກວ່າການຮັບບັບຕິສະມາເປັນສັນຍາລັກເຖິງການສິ້ນພຣະຊົນ, ການຝັງໄວ້, ແລະ ການເປັນຄືນພຣະຊົນຂອງພຣະເຢຊູຄຣິດ, ຜູ້ຮັບບັບຕິສະມາຈຶ່ງຕ້ອງລົງໄປໃນນ້ຳ, ຈຸ່ມລົງໄປໃຕ້ນ້ຳ, ແລ້ວຈຶ່ງຂຶ້ນມາຈາກນ້ຳ (ກຈກ 8:38). ເປັນເງື່ອນໄຂເບື້ອງຕົ້ນສຳລັບການເປັນສະມາຊິກຂອງຄຣິສຕະຈັກ. ໃນວັນເພັນເຕຄໍສະເຕ, ຜູ້ທີ່ໄດ້ຮັບບັບຕິສະມາແລ້ວ ກໍໄດ້ຖືກນັບເຂົ້າເປັນສະມາຊິກຂອງຄຣິສຕະຈັກ (2:41). ມີພຣະຄຣິດເປັນສູນກາງ. ໂປໂລໄດ້ຕັ້ງຄຳຖາມກ່ຽວກັບລະບົບຄວາມເຊື່ອທີ່ພວກເຂົາຍຶດຖືໃນຕອນທີ່ຮັບບັບຕິສະມານັ້ນ. ກ່າວອີກຢ່າງໜຶ່ງກໍຄື, ບຸກຄົນໜຶ່ງອາດຈະໄດ້ຮັບການຈຸ່ມລົງໃນນ້ຳຫຼັງຈາກທີ່ເຂົາໄດ້ກັບໃຈເຊື່ອ ແລະໄດ້ຮັບເຂົ້າເປັນສະມາຊິກຂອງຄຣິສຕະຈັກທ້ອງຖິ່ນແລ້ວກໍຕາມ, ແຕ່ຖ້າຫາກຜູ້ທີ່ດຳເນີນພິທີບັບຕິສະມານັ້ນມີລະບົບຄວາມເຊື່ອທີ່ບໍ່ຖືກຕ້ອງ ຫຼືບໍ່ຄົບຖ້ວນ, ຫຼື ຖ້າການຮັບບັບຕິສະມານັ້ນບໍ່ໄດ້ມີພຣະຄຣິດເປັນສູນກາງ, ມັນກໍຖືວ່າບໍ່ແມ່ນການຮັບບັບຕິສະມາຕາມຫຼັກການໃນພຣະຄຳພີ. ການຮັບບັບຕິສະມາຂອງພວກເຂົານັ້ນຍັງບໍ່ຖືກຕ້ອງສົມບູນ. ເພື່ອຈະໃຫ້ເປັນການຮັບບັບຕິສະມາໃນຮູບແບບທີ່ປະຕິບັດກັນໃນສະໄໝພຣະຄຳພີໃໝ່, ມັນຈະ<u>ຕ້ອງມີພຣະຄຣິດເປັນສູນກາງ</u>... ໂປໂລຕ້ອງການໃຫ້ສາວົກເຫຼົ່ານີ້ຮັບບັບຕິສະມາເຂົ້າໃນພຣະຄຣິດ ເພາະສິ່ງທີ່ພວກເຂົາມີນັ້ນມີພຽງແຕ່ການຮັບບັບຕິສະມາຂອງໂຢຮັນເທົ່ານັ້ນ. ລາວໄດ້ອະທິບາຍວ່າການຮັບບັບຕິສະມາຂອງໂຢຮັນນັ້ນເປັນການກະກຽມລໍຖ້າສິ່ງທີ່ຈະມາເຖິງ. ຂ່າວປະເສີດທີ່ສົມບູນນັ້ນ ລວມມີທັງການກັບໃຈແບບທີ່ໂຢຮັນໄດ້ປະກາດ, ແລະ ການມອບຊີວິດໃຫ້ແກ່ພຣະຄຣິດແບບທີ່ໂປໂລໄດ້ປະກາດ, ເຊິ່ງນຳໄປສູ່ການສະຖິດຢູ່ພາຍໃນຂອງພຣະວິນຍານບໍຣິສຸດຕາມທີ່ພຣະເຢຊູໄດ້ສັນຍາໄວ້ (ໂຢຮັນ 14:16). ເຖິງແມ່ນວ່າຜູ້ຕິດຕາມຂອງໂຢຮັນຜູ້ໃຫ້ບັບຕິສະມາເຫຼົ່ານີ້ຈະໄດ້ຮັບບັບຕິສະມາແລ້ວ, ແຕ່ບັບຕິສະມາຂອງພວກເຂົາກໍບໍ່ແມ່ນບັບຕິສະມາແບບຄຣິດສະຕຽນ ເພາະມັນບໍ່ໄດ້ມີພຣະຄຣິດເປັນສູນກາງ. ການຮັບບັບຕິສະມານັ້ນ ເກີດຂຶ້ນພາຍຫຼັງການໄດ້ຮັບຄວາມລອດ ແລະ ເປັນການຢືນຢັນເຖິງສິ່ງທີ່ພຣະເຢຊູໄດ້ກະທຳໃນຊີວິດຂອງເຮົາ. *ໂປໂລໄດ້ຈຳແນກຄວາມແຕກຕ່າງລະຫວ່າງ ບັບຕິສະມາຂອງໂຢຮັນຜູ້ໃຫ້ບັບຕິສະມາ ກັບ ຄວາມເຊື່ອໃນພຣະເຢຊູ ແນວໃດ?...*

<u>ນຳໃຊ້ໃນຊີວິດ</u>

ເຖິງແມ່ນວ່າການຮັບບັບຕິສະມາຈະບໍ່ແມ່ນສິ່ງທີ່ຊ່ວຍໃຫ້ເຮົາລອດພົ້ນ, ແຕ່ມັນກໍເປັນສິ່ງທີ່ສຳຄັນ. ມັນເປັນການສະແດງອອກເຖິງການເຊື່ອຟັງຄັ້ງທຳອິດສຳລັບພວກເຮົາໃນຖານະຜູ້ເຊື່ອ. ເຮົາໄດ້ຮັບຄຳສັ່ງໃຫ້ປະກາດເຖິງວຽກງານການໃຫ້ອະໄພຂອງພຣະເຈົ້າທີ່ມີຢູ່ໃນຊີວິດຂອງເຮົາ, ແລະ ວິທີໜຶ່ງທີ່ເຮົາສາມາດເຮັດສິ່ງນັ້ນໄດ້ ກໍຄືຜ່ານທາງການຮັບບັບຕິສະມາ.

ມຸມມອງຕໍ່ພຣະເຈົ້າ. ຖ້າເຈົ້າໄດ້ວາງໃຈໃນພຣະຄຣິດແລ້ວ ແຕ່ຍັງບໍ່ທັນໄດ້ຮັບບັບຕິສະມາ, ໃຫ້ຕິດຕໍ່ນັດໝາຍກັບສິດຍາພິບານ ຫຼື ທີມງານໃນຄຣິສຕະຈັກຂອງເຈົ້າ ເພື່ອປຶກສາຫາລືກ່ຽວກັບຂັ້ນຕອນການເຊື່ອຟັງທີ່ສຳຄັນນີ້.

ມຸມມອງຕໍ່ຕົນເອງ. ເມື່ອຄຣິສຕະຈັກກຳນົດເວລາສຳລັບການຮັບບັບຕິສະມາຂອງເຈົ້າແລ້ວ, ໃຫ້ປະກາດເຫດການດັ່ງກ່າວລົງໃນສື່ສັງຄົມອອນລາຍ ແລະ/ຫຼື ເຊີນໝູ່ເພື່ອນ, ຄອບຄົວ, ແລະ ເພື່ອນຮ່ວມງານຂອງເຈົ້າໃຫ້ເຂົ້າຮ່ວມເປັນສັກຂີພະຍານ.

ມຸມມອງຕໍ່ຜູ້ອື່ນ. ຖ້າເຈົ້າໄດ້ຮັບບັບຕິສະມາແລ້ວ, ໃນອາທິດນີ້ ຈົ່ງແບ່ງປັນປະສົບການແຫ່ງຄວາມລອດຂອງເຈົ້າກັບຜູ້ອື່ນໄດ້ຮັບຮູ້.

ອຸປຖຳໂດຍ ລາວຊາວເທີນບັບຕິສສັມພັນ https://ulsb.org/sunday-school-2/ **ແປໂດຍ PA**